# ຖິ່ນທອງ

ໂດຍ: ສາວຫຼັກ 7 ເມັດນ້ຳຕານເມືອງສວັນ

ແຜ່ນດິນທອງຖິ່ນເຄົ້າ ທີ່ເຮົາຮັກເຫຼືອຫຼາຍ
ກາຍເດືອນເຈັດຝົນລິນ ຫຼັ່ງລົງຈາກເມືອງຟ້າ
ນ້ຳມີປາ ນາມີເຂົ້າ ຊາວນາເຮົາຂຸດກົ່ນ
ຢາດເຫື່ອໄຫຼຫຼັ່ງລົ້ນ ລົງພື້ນແຜ່ນດິນ

ດວງຕາວັນໃກ້ຈະຊິ້ນ ລາລັບດັບແສງ
ທ້ອງທົ່ງນາຍາມແລງ ອ່ອນແສງສີເສົ້າ
ຈົນວ່າເຖິງເວລາເຊົ້າ ເຈົ້າໃສຊື້ນໃຫມ່
ແນມໄປເຫັນແດດກ້າ ທົ່ງນາກວ້າງຈັ່ງແມ່ນງາມ ທ່ານເອີຍ

ຫຼາຍປີຂ້າມຂອບຟ້າ ມາສູ່ເມືອງຈະເຣີນ
ສຸດເພີດເພີນທາງກາຍ ແຕ່ສ່ວນໃຈຄະນຶງບ້ານ
ຄິດເຖິງລຳທານຫ້ວຍ ໃສເຢັນນ້ຳສະອາດ
ຄິດຮອດຄອນຕາດແກ້ວ ແລງເຊົ້າຢູ່ຖິ່ນທອງ

ຍາມເຮົາຈາກພີ່ນ້ອງ ຊິເຫີນຫ່າງລາໜີ
ທໍຣະນີນຳປົກປັກ ເຝົ້າຮັກສາເຮົາໄວ້
ຈິດໃຈມີມົນຕ້ອງ ແຜ່ນດິນທອງນາງກົ້ມຂາບ
ນ້ຳຕາໄຫຼອາບໜ້າ ຊິລາບ້ານຫ່າງໄກ

ອັນຕະຣາຍເຄາະຮ້າຍ ຈຶ່ງໄດ້ຜ່ານກາຍໜີ
ກົ້ມຂາບນາງທໍຣະນີ ແມ່ຜູ້ມີມົນກ້າ

ປັຕພິພາຍພື້ນ          ໃນພື້ນດິນໂລກລຸ່ມ
ຈຶ່ງຄຸ້ມຄອງລູກໄວ້    ພັຍຮ້າຍໃຫ້ຫ່າງໄກ

ຊາວລາວໄປຢູ່ກໍ້າ    ເຂດຖິ່ນດິນໃດ
ແຕ່ຫົວໃຈຍັງປອງ      ຖິ່ນທອງຂອງເຄົ້າ
ຜູ້ທີ່ເນົາໃນຫ້ອງ       ພື້ນດິນທອງບ້ານເກົ່າ
ຄິດເຫັນລາວທົ່ວໜ້າ   ຜູ້ລາບ້ານຫ່າງນະຄອນ  ແດ່ເດີ

ຖ້າວ່າຊີວິດຂ້ອນ       ໃຫ້ຍ້ອນເມື່ອຄາວຫຼັງ
ອະນິຈັງ ອະນິຈາ       ຈຶ່ງເມດຕາໄກກວ້າງ
ທາງຫຼວງເດີນຕອນທ້າຍ  ບໍ່ມີໃຜຊິໄດ້ຜ່ານ
ສະພານສຸດຢູ່ຫັ້ນ         ຊີວັນມ້ວນຫຼີກບໍ່ເປັນ

ບໍ່ມີໃຜຫຼີກເວັ້ນ          ເກີດ ແກ່ ເຈັບ ຕາຍ
ຍາມເມື່ອວາຍຊີວັງ      ໃຫ້ຊື່ຍັງຄົງຟ້າ
ດິນຕອນໃດຈະຖົມໜ້າ  ຝັງກາຍຍາພຽງດັບກິ່ນ
ສ່ວນວິນຍານຜູ້ຂ້າ      ບູຊາໄວ້ຢູ່ຖິ່ນທອງ     ທ່ານເອີຍ